ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມສຳມະນາການໃນຫົວຂໍ້ "ເພີ່ມທະວີຄວາມຮູ້ພື້ນຖານ ທາງດ້ານການເງິນແບບດີຈີຕອນແກ່ຊຸມຊົນຜູ້ທີ່ດ້ອຍໂອກາດ"




ໃນລະຫວ່າງວັນທີ 20-22 ພະຈິກ 2023 ນີ້, ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມກັບທະນາຄານພັດທະນາອາຊີ (ADB) ໄດ້ຈັດສຳມະນາໃນຫົວຂໍ້: "ການເພີ່ມທະວີຄວາມຮູ້ພື້ນຖານທາງດ້ານການເງິນແບບດີຈີຕອນແກ່ຊຸມຊົນຜູ້ທີ່ດ້ອຍໂອກາດ" ຢູ່ທີ່ຊັ້ນ 6 ທຫລ ໂດຍການເປັນປະທານຮ່ວມຂອງ ທ່ານ ນ. ມະໂນລາ ເມືອງມະນີ ວ່າການຫົວໜ້າກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ຮ່ວມກັບ ADB ປະຈຳ ສປປ ລາວ ພ້ອມດ້ວຍຄະນະ, ມີຕາງໜ້າຈາກທະນາຄານກາງແຕ່ລະປະເທດສະມາຊິກອາຊຽນ 5 ປະເທດ ທີ່ໄດ້ມາເປັນຜູ້ບັນຍາຍ ແລະ ຜູ້ເຂົ້າຮ່ວມຈາກກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງລະບົບຊຳລະ, ກົມບໍລິການທະນາຄານ, ກົມຮ່ວມມືສາກົນ, ກົມຈັດຕັ້ງແລະພະນັກງານ, ສຳນັກງານປົກປ້ອງຜູ້ຝາກເງິນ ແລະ ສະມາຄົມການເງິນຈຸລະພາກ ເຂົ້າຮ່ວມຈຳນວນ 30 ທ່ານ.

ຈຸດປະສົງຂອງການຈັດກອງປະຊຸມສຳມະນາໃນຄັ້ງນີ້, ເພື່ອເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຂອງ ທຫລ ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ກັບການຈັດຕັ້ງປະຕິບັດໃນບັນດາປະເທດສະມາຊິກອາຊຽນດ້ວຍກັນ ແລະ ຍັງສົ່ງເສີມໃຫ້ຄວາມຮູ້ພື້ນຖານທາງດ້ານການເງິນແກ່ທຸກເພດທຸກໄວ, ລວມເຖິງນັກລົງທຶນ ແລະ ປະຊາຊົນທີ່ຢູ່ຫ່າງໄກສອກຫຼີກສາມາດເຂົ້າເຖິງ ເພື່ອໃຫ້ເຂົາເຈົ້າສາມາດບໍລິຫານຄວາມສ່ຽງດ້ານການເງິນໄດ້ດ້ວຍຕົວເອງ ໂດຍຜ່ານຂະບວນການທີ່ຜູ້ຊົມໃຊ້ຮູບແບບຜະລິດຕະພັນດ້ານການສຶກສາທາງດ້ານການເງິນ ແລະ ຄວາມສ່ຽງທາງດ້ານການເງິນໂດຍຜ່ານຂໍ້ມູນຂ່າວສານ ແລະ ຄຳແນະນຳຕ່າງໆ ເພື່ອນຳມາພັດທະນາທາງດ້ານທັກສະ ແລະ ສ້າງຄວາມໝັ້ນໃຈໃນການສ້າງໂອກາດທາງການເງິນໃຫ້ຫຼາຍຂຶ້ນ.





ການຈັດສຳມະນາດັ່ງກ່າວ ແມ່ນໄດ້ດຳເນີນເປັນເວລາ 2 ມື້ເຄິ່ງ, ດ້ວຍບັນຍາກາດອັນຟົດຟື້ນ ຊຶ່ງນັກສຳມະກອນກໍ່ໄດ້ເອົາໃຈໃສ່ຮັບຟັງການອະທິບາຍ, ຕັ້ງຄຳຖາມ ແລກປ່ຽນຄຳຄິດເຫັນ ເຊິ່ງກັນ ແລະ ກັນ, ໄດ້ປິດລົງດ້ວຍຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວ່າງໄວ້.

ຂ່າວ-ພາບ: ທ ສົມພິດ ທຳມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*